*Journal of Science and Teacher Education (JLSTE), 1*(2), 255-265

# ການປົກປັກຮັກສາ ແລະ ສົ່ງເສີມວັດທະນະທຳຂອງໄຕດຳ, ແຂວງບໍ່ແກ້ວ, ສ.ປ.ປ ລາວ

*ສົມເໝາະ ປັນຍາວົງ*, ຈິນດາ ສີພາລາ, ພອນ ສົມະວົງ ແລະ ວັນພອນ ພາມີ*

*ຄະນະອັກສອນສາດ ມະຫາວິທະຍາໄລແຫ່ງຊາດ*

## ບົດຄັດຫຍໍ້

ຈຸດປະສົງຫຼັກຂອງການຄົ້ນຄວ້າ ແມ່ນເພື່ອອະທິບາຍພິທີກຳການເສັນເຮືອນ, ປາດໂຕງເຂົ້າໃໝ່ ແລະ ກຳບ້ານ; ວິທີການປົກປັກຮັກສາ ແລະ ສົ່ງເສີມວັດທະນະທຳຂອງຊາວໄຕດຳ; ເພື່ອພິສູດ ແລະ ອະທິບາຍຄວາມແຕກຕ່າງໃນດ້ານວິທີການປົກປັກຮັກສາ ແລະ ສົ່ງເສີມວັດທະນະທຳຂອງຊາວໄຕດຳ ໂດຍອີງໃສ່ເພດຍິງຊາຍ, ບ້ານຢູ່ອາໃສ ແລະ ອາຍຸ. ນຳໃຊ້ການຄົ້ນຄວ້າປະສົມວິທີ ຮູບແບບຄູ່ຂະໜານຄຽງຄູ່ກັນ (Convergent Parallel Mixed Methods Design) ຊຶ່ງຮ່ວມທັງການຄົ້ນຄວ້າແບບປະລິມານ ແລະ ຄຸນນະພາບ.

ຜົນການວິເຄາະພົບວ່າ: ຈຸດປະສົງການເຮັດ ພິທີກຳເສັນເຮືອນ, ປາດໂຕງເຂົ້າໃໝ່ ກໍຄືພິທີກຳກຳບ້ານຂອງຊາວໄຕດຳ ແມ່ນເພື່ອເພື່ອລ້ຽງຜີເຮືອນ, ຜີພໍ່ຜີແມ່, ຜີປູ່ຍ່າຕາຍາຍ, ຜີຍາດພີ່ນ້ອງ, ຜີບັນພະບຸ ລຸດ, ເທວະດາຟ້າແຖນ ແລະ ເຮັດໃຫ້ລູກຫຼານໃນຕະກຸນຢູ່ດີມີແຮງ, ມີອາຍຸໝັ້ນຍືນຍາວ ແລະ ປັດສະຈາກໂລກໄພເຄາະຮ້າຍທັງປວງ. ພ້ອມນັ້ນ, ຍັງພົບວ່າ: ໃນມື້ກ່ອນພິທີກຳເສັນເຮືອນ ແລະ ປາດໂຕງເຂົ້າໃໝ່ ແມ່ນມີກິດຈະກຳສຳຄັນທາງປະເພນີຫຼາຍຢ່າງ ເປັນຕົ້ນມີການກະກຽມເຄື່ອງດື່ມ, ອາຫານ, ຈັດອາຫານຫວານຄາວ, ເຂົ້າເໝົ້າເຂົ້າຮາງ. ໃນມື້ພິທີກຳເສັນເຮືອນ ແລະ ປາດໂຕງເຂົ້າໃໝ່ ມີການຈັດແຕ່ງພາເຂົ້າອາຫານຫວານຄາວ, ເຫຼົ້າຂາວ ແລະ ນ້ຳດື່ມ ແລ້ວຍໍຖວາຍບັນພະບຸລຸດຢູ່ກະລໍ່ຫ້ອງພ້ອມທັງຮັບປະທານອາຫານຮ່ວມກັບຍາດຕິພີ່ນ້ອງ. ສຳລັບໃນມື້ກ່ອນພິທີກຳບ້ານ ແມ່ນມີກິດຈະກຳສຳຄັນທາງປະເພນີຫຼາຍຢ່າງເຊັ່ນກັນ ເປັນຕົ້ນ ການກະກຽມເຄື່ອງດື່ມ, ອາຫານ, ຈັດອາຫານຫວານຄາວ, ເຂົ້າເໝົ້າເຂົ້າຮາງ. ໃນມື້ພິທີກຳບ້ານ ແມ່ນມີການຈັດແຕ່ງພາເຂົ້າອາຫານຫວານຄາວ, ເຫຼົ້າຂາວ ແລະ ນ້ຳດື່ມ ຍໍຖວາຍຢູ່ຫໍຜີບ້ານເພື່ອລ້ຽງຜີບ້ານ, ສານຕາແຫຼວປັກອ້ອມບ້ານ, ແກ່ກະໂຫງໄມ້, ຕີຄ້ອງ, ຕີກອງ, ຕີແຊ່ງ, ຕີໂກ່ງໃຫຍ່, ແຫ່ໄປຕາມແຕ່ລະເຮືອນ, ຫຼິ້ນໝາກຄ່າງ, ຫຼິ້ນໝາກແລ້ ແລະ ຫຼິ້ນໝາກຄອນ ພ້ອມຮັບປະທານອາຫານຮ່ວມກັບຍາດຕິພີ່ນ້ອງ. ຜົນການວິເຄາະຍັງພົບວ່າ: ເຜົ່າໄຕດຳ ປົກປັກຮັກສາມໍລະດົກວັດທະນະທຳຂອງຕົນດ້ວຍການຮຽນຮູ້ດ້ານວັດທະນະທຳ, ປະເພນີ ແລະ ວິຖີຊີວິດ, ຈັດງານພິທີກຳເປັນປົກກະຕິ, ປູກຈິດສຳນຶກດ້ານວັດທະນະທຳໃຫ້ລູກຫຼານທີ່ເປັນຜູ້ສືບທອດ. ການເຜີຍແຜ່ວັດທະນະທຳໄດ້ຮັບການເອົາໃຈໃສ່ດ້ວຍຫຼາຍຮູບແບບເປັນຕົ້ນ ການສະແດງສິລະປະໃນໂອກາດງານສຳຄັນຕ່າງໆ; ສ້າງກິດຈະກຳປະຊາສຳພັນ ສົ່ງເສີມວັດທະນະທຳ ຜ່ານຮູບແບບດິຈິຕອນໃນຍຸກເຕັກໂນໂລຊີຂໍ້ມູນຂ່າວສານດ້ວຍ ການມີສ່ວນຮ່ວມຂອງທຸກພາກສ່ວນ ທີ່ກ່ຽວຂ້ອງໃນຊຸມຊົນ.

***ຄຳສັບສຳຄັນ:*** *ການປົກປັກຮັກສາ, ສົ່ງເສີມ, ວັດທະນາທຳໄຕດຳ, ແຂວງບໍ່ແກ້ວ*

**ຕິດຕໍ່ພົວພັນ: ສົມເໝາະ ປັນຍາວົງ ເບີໂທລະສັບ 020 5912 5301 ອີເມວ: more_ries85@yahoo.com*

# Preservation and Promotion of Tai Dam Culture, Bokeo Province, Lao PDR

*Sommor PANYAVONG*, Lamphong VOLADY, Chinda SEEPHALAR,*

*Phone SEEMAVONG, Vanhphone PHAMI*

*Faculty of Letters, National University of Laos*

## Abstract

The main objectives of the research are to describe the rituals of house blessing, new rice harvesting, and village rites; the methods of preserving and promoting the culture of the Tai Dam people; and to prove and explain the differences in the methods of preserving and promoting the culture of the Tai Dam people based on gender, village of residence, and age. A Convergent Parallel Mixed Methods Design was used, which includes both quantitative and qualitative research.

The analysis results found that: the purpose of performing the house blessing ritual, new rice harvesting ritual, and village rites of the Tai Dam people is to feed the house spirits, father and mother spirits, grandparents' spirits, relatives' spirits, ancestral spirits, heavenly deities, and to ensure that descendants in the family live well, are strong, have long lives, and are free from all kinds of diseases and misfortunes. In addition, it was also found that: on the day before the house blessing and new rice harvesting rituals, there are many important traditional activities, such as preparing drinks, food, arranging sweet and savory dishes, *Khao Mao* (flattened rice), and *Khao Hang* (roasted rice). On the day of the house blessing and new rice harvesting rituals, sweet and savory food trays, white liquor, and drinking water are prepared and offered to ancestors at the *Kalor Hong* (ancestral altar), followed by eating together with relatives. As for the day before the village rites, there are also many important traditional activities, such as preparing drinks, food, arranging sweet and savory dishes, *Khao Mao*, and *Khao Hang*. On the day of the village rites, sweet and savory food trays, white liquor, and drinking water are prepared and offered at the village spirit shrine to feed the village spirits. *San Ta Laew* (woven bamboo symbols) are planted around the village, wooden *Kathong* (offerings) are carried, gongs are beaten, drums are beaten, cymbals are beaten, large drums (*Kong Yai*) are beaten, and a procession goes from house to house, playing *Mak Khang*, *Mak Lae*, and *Mak Khon*, along with eating together with relatives. The analysis also found that: the Tai Dam ethnic group preserves their cultural heritage by learning about culture, traditions, and way of life, regularly organizing rituals, instilling cultural awareness in descendants who are successors. Cultural dissemination is given attention through various forms, such as artistic performances on important occasions; creating public relations activities to promote culture through digital formats in the information technology era with the participation of all relevant parties in the community.

***Keywords:*** *Preservation, Promotion, Tai Dam culture, Bokeo Province.*

**Correspondence: Sommor PANYAVONG Tel: 020 5912 5301; Email: more_ries85@yahoo.com*

## 1. ພາກສະເໜີ

### *1.1 ຄວາມເປັນມາ ແລະ ຄວາມສຳຄັນຂອງບັນຫາ*

ແຂວງບໍ່ແກ້ວຕັ້ງຢູ່ທາງທິດຕາເວັນຕົກສຽງເໜືອຂອງ ສ ປ ປ. ລາວ, ມີເນື້ອທີ່ທັງໝົດ 6,196 ກິໂລຕາແມັດ ຫຼື 697,600 ເຮັກຕາ ແລະ ມີຊາຍແດນຕິດກັບບັນດາປະເທດໃກ້ຄຽງ ແລະ ບັນດາແຂວງຄື: ທິດຕາເວັນຕົກຕິດກັບລາຊະອານາຈັກໄທ ຍາວປະມານ 145 ກິໂລແມັດ. ໃນນັ້ນ, ທາງບົກ 48 ກິໂລແມັດ ແລະ ທາງນໍ້າ (ແມ່ນໍ້າຂອງ) ຍາວປະມານ 97 ກິໂລແມັດ, ທິດເໜືອຕິດກັບປະເທດມຽນມາ ຍາວປະມານ 98 ກິໂລແມັດ (ນໍ້າຂອງ), ທິດຕາເວັນອອກສຽງເໜືອຕິດກັບແຂວງຫຼວງນໍ້າທາ ຍາວປະມານ 100 ກິໂລແມັດ ແລະ ແຂວງອຸດົມໄຊ ຍາວ 110 ກິໂລແມັດ, ທິດໃຕ້ຕິດກັບແຂວງໄຊຍະບູລີ ຍາວ 35 ກິໂລແມັດ.

ແຂວງບໍ່ແກ້ວເປັນແຂວງທີ່ມີປະຕູທາງຜ່ານເຂົ້າ-ອອກທາງດ້ານທິດຕາເວັນຕົກສຽງເໜືອ ແລະ ທິດເໜືອຂອງ ສປປ. ລາວ ເຊັ່ນ: ປະຕູທາງຜ່ານທາງບົກຖືເອົາເສັ້ນທາງ R3 ເປັນທາງຜ່ານລະດັບອະນຸພາກພື້ນ ທີ່ມີຈຸດເຊື່ອມຕໍ່ຈາກປະເທດໄທ ໂດຍມີຂົວຂ້າມແມ່ນໍ້າຂອງແຫ່ງທີ 4 ຜ່ານດ່ານສາກົນເມືອງຫ້ວຍຊາຍ, ແຂວງບໍ່ແກ້ວຕໍ່ໃສ່ແຂວງຫຼວງນໍ້າທາ ອອກໄປສູ່ ສປ. ຈີນ (ແຂວງຢຸນນານ) ໃນຂະນະດຽວກັນ, ແຂວງບໍ່ແກ້ວກໍແມ່ນແຂວງໜຶ່ງ ທີ່ຢູ່ໃນແລວເຂດເສດຖະກິດເໜືອ-ໃຕ້ ເຊິ່ງມີເສັ້ນທາງຜ່ານແຂວງຜົ້ງສາລີໄປສູ່ດ່ານສາກົນໄຕຈາງຕິດກັບ ສສ. ຫວຽດນາມ. ມີເຂດເສດຖະກິດພິເສດສາມລ່ຽມຄຳ ແລະ ມີເງື່ອນໄຂສະດວກສຳລັບການຄ້າ-ການລົງທຶນ ເປັນເຂດເຊື່ອມໂຍງເສດຖະກິດຊາຍແດນ (ລາວ, ໄທ, ມຽນມາ ແລະ ສປ. ຈີນ) ພ້ອມກັນນັ້ນ, ຍັງປະກອບມີທົ່ງພຽງທີ່ເອື້ອອໍານວຍໃຫ້ແກ່ການຂະຫຍາຍດ້ານການຜະລິດກະສິກຳ, ລ້ຽງສັດ ແລະ ປູກພືດເປັນສິນຄ້າ ປະຊາກອນປະກອບດ້ວຍຫຼາຍເຜົ່າຊົນ ທີ່ມີມູນເຊື້ອດຸໝັ່ນ ແລະ ມີ

ວັດທະນະທຳດັ້ງເດີມປະຈຳເຜົ່າຢ່າງຫຼາກຫຼາຍເຊິ່ງເປັນທີ່ຈັບໃຈໃຫ້ແກ່ນັກທ່ອງທ່ຽວ.

ແຂວງບໍ່ແກ້ວເປັນແຂວງນ້ອຍສ້າງຕັ້ງໃໝ່ປະກອບມີ 5 ເມືອງຄື: ເມືອງຫ້ວຍຊາຍ, ເມືອງຕົ້ນເຜີ້ງ, ເມືອງ ເມິງ, ເມືອງປາກທາ, ເມືອງຜາອຸດົມ ແລະ ເຂດເສດຖະກິດພິເສດສາມລ່ຽມຄຳ. ປະກອບດ້ວຍ 13 ເຜົ່າຄື: ລາວ, ລື້, ກຶມມຸ, ມົ້ງ, ພູນ້ອຍ (ສິງສີລີ), ອິວມຽນ, ລະເມດ, ສາມຕ້າວ, ຍວນ, ໄຕ, ໄທເໜືອ, ລາຫູ, ອາຄາ. ແຕ່ລະຊາວໄຕລ້ວນແຕ່ມີຮີດຄອງປະເພນີ ແລະ ວິຖີການດຳລົງຊີວິດທີ່ແຕກຕ່າງກັນ, ມີລະດັບຄວາມຮູ້ຄວາມເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ການສ້າງສາພັດທະນາ ແລະ ວິຖີການດຳລົງຊີວິດທີ່ແຕກຕ່າງກັນ; ແຕ່ບົນພື້ນຖານລວມແລ້ວ, ແຕ່ລະເຜົ່າມີຈຸດພິເສດອັນໜຶ່ງທີ່ເປັນເອກະລັກຂອງວັງຄະນະຍາດແຫ່ງຊາດ ເຊິ່ງແມ່ນການປະສານຢ່າງກົມກຽວ ເປັນສິ່ງຍອດຍິ່ງທາງດ້ານວັດທະນະທຳຂອງທຸກເຜົ່າ ເຊິ່ງໄດ້ກາຍເປັນມໍລະດົກອັນລ້ຳຄ່າ, ເປັນພື້ນຖານດ້ານຈິດໃຈຂອງສັງຄົມ ແລະ ເປັນປັດໄຈສຳຄັນໃຫ້ແກ່ການຢືນຢົງຄົງຕົວ ແລະ ຂະຫຍາຍຕົວຂອງຊາດລາວເຮົາກໍຄື ປະຊາຊົນບັນດາເຜົ່າຊາວແຂວງບໍ່ແກ້ວ.

ເມືອງຕົ້ນເຜີ້ງສ້າງຕັ້ງຂຶ້ນໃນປີ 1975 ຕັ້ງຢູ່ບໍລິເວນສາມລ່ຽມຄຳ, ທາງທິດຕາເວັນຕົກສຽງເໜືອຂອງແຂວງບໍ່ແກ້ວ ຫ່າງຈາກເທດສະບານແຂວງປະມານ 50 ກິໂລແມັດ, ມີເນື້ອທີ່ 715 ກິໂລຕາແມັດ, ກວມເອົາ 11.53% ຂອງເນື້ອທີ່ທົ່ວແຂວງ ມີຊາຍແດນຕິດກັບບັນດາເມືອງຄື: ທິດເໜືອ ແລະ ທິດຕາເວັນອອກຕິດກັບເມືອງເມິງ, ທິດໃຕ້ຕິດກັບເມືອງຫ້ວຍຊາຍ, ທິດຕາເວັນຕົກຕິດກັບລາຊະອານາຈັກໄທຍາວ 45 ກິໂລແມັດ ແລະ ມຽນມາຍາວ 44 ກິ ໂລແມັດ (ມີແມ່ນ້ຳຂອງເປັນຊາຍແດນ). ປະກອບມີ 38 ບ້ານ, ຈັດແບ່ງອອກເປັນ 7 ກຸ່ມບ້ານພັດທະນາ ແລະ 4 ບ້ານໃຫຍ່, ມີ 7,185 ຄົວເຮືອນ, ມີພົນລະເມືອງທັງ ໝົດ 35.349 ຄົນ, ເປັນຍິງ 16,801 ຄົນ. ປະກອບມີ 10 ເຜົ່າຊາວໄຕຄື: ລາວ, ລື້, ຍວນ, ຊາວໄຕດຳ, ໄຕເໜືອ, ມົ້ງ, ອິ້ວມຽນ, ກຶມມຸ, ອາຄ່າ ແລະ ລາຫູ.

ຊາວໄຕດຳທີ່ມາຕັ້ງຖິ່ນຖານຢູ່ ແຂວງບໍ່ແກ້ວຈຳນວນຫຼາຍ ແມ່ນໄດ້ອົບພະຍົບມາຈາກເມືອງແຖນ ແຂວງເຊີນລາ (ສສ. ຫວຽດນາມ) ເຫດຜົນຂອງການອົບພະຍົບ ແມ່ນຍ້ອນວ່າ ໃນເຂດພາກເໜືອຫວຽດນາມເປັນເຂດພູດອຍບ່ອນທຳການຜະລິດບໍ່ພຽງພໍ, ອີກດ້ານໜຶ່ງ ແມ່ນຍ້ອນຈັກກະພັດຝຣັ່ງທີ່ເຂົ້າມາປົກຄອງໄດ້ຕັ້ງຖານທັບ ແລະ ທຳສົງຄາມປາບປາມ, ກົດຂີ່ຂູດຮີດປະຊາຊົນຢ່າງໜັກໜ່ວງ. ຈາກສະພາບດັ່ງກ່າວ ຊາວໄຕດຳຈຶ່ງຊັກຊວນກັນຍ້າຍມາຢູ່ປະເທດລາວ. ໃນໄລຍະເບື້ອງຕົ້ນ ແມ່ນຍົກຍ້າຍຜ່ານແຂວງຜົ້ງສາລີ, ເມືອງໄຊ, ເມືອງນາໝໍ້ (ແຂວງອຸດົມໄຊ) ມາຕັ້ງຖິ່ນຖານຢູ່ແຂວງຫຼວງນ້ຳທາເປັນເວລາຫຼາຍສິບປີ. ຈາກນັ້ນ, ຈຶ່ງຍ້າຍມາຢູ່ແຂວງບໍ່ແກ້ວ, ປັດຈຸບັນຊາວໄຕດຳຢູ່ແຂວງບໍ່ແກ້ວ ມີ 794 ຄອບຄົວ, ມີພົນລະເມືອງ 3,694 ຄົນ, ຍິງ 1,803 ຄົນ, ກວມ 2,06 ສ່ວນຮ້ອຍຂອງພົນລະເມືອງໃນທົ່ວແຂວງ (ບົດລາຍງານ 30 ປີແຫ່ງການກ້າວຂຶ້ນແຂວງບໍ່ແກ້ວ, 2013).

ຊາວໄຕດຳເປັນຊາວໄຕໜຶ່ງທີ່ອາໄສຢູ່ຢ່າງໜາແໜ້ນໂດຍສະເພາະຢູ່ບ້ານສີເມືອງງາມ, ບ້ານນ້ຳແງ້ນ, ບ້ານນ້ຳເກິ່ງ, ບ້ານຕົ້ນເຜີ້ງ ແລະ ບ້ານນາກົງ ເມືອງຕົ້ນເຜີ້ງ, ແຂວງບໍ່ແກ້ວ ພື້ນທີ່ດັ່ງກ່າວມີຄວາມສຳຄັນຫຼາຍ, ເນື່ອງຈາກວ່າມີຊາຍແດນຕິດກັບ 2 ປະເທດຄື: ປະເທດໄທ ແລະ ມຽນມາ ເຊິ່ງເປັນທີ່ຕັ້ງທາງຍຸດທະສາດທີ່ສຳຄັນທີ່ພັກ-ລັດຖະບານໄດ້ພັດທະນາເຂດດັ່ງກ່າວນີ້ ໃຫ້ກາຍເປັນເຂດເສດຖະກິດສາມລ່ຽມຄຳ. ປັດຈຸບັນນີ້ເມືອງຕົ້ນເຜີ້ງ, ເປັນເມືອງທີ່ມີຫຼາຍຊົນຊາດຊາວໄຕມາອາໄສປະປົນເປັນຈຳນວນຫຼວງຫຼາຍ ເຊິ່ງໄດ້ກໍ່ໃຫ້ເກີດການປະສົມປະສານທາງດ້ານເຊື້ອຊາດ, ສາສະໜາ, ຄວາມເຊື່ອທາງວັດທະນະທຳ ແລະ ຄ່ານິຍົມຕ່າງໆ ທີ່ທັນສະໄໝ, ລວມທັງຮູບແບບການດຳລົງຊີວິດທີ່ແຕກຕ່າງໄປຈາກເດີມໄດ້ແຜ່ກະຈາຍເຂົ້າມາ ແລະ ສົ່ງຜົນກະທົບທັງທາງກົງ ແລະ ທາງອ້ອມ ເຮັດໃຫ້ວັດທະນະທຳອັນດີງາມອັນດີງາມຂອງຊາວໄຕໃນຂົງເຂດນີ້ ບາງຢ່າງມີການປ່ຽນແປງໄປຢ່າງໄວວາ (ບົດສະຫຼຸບປະຈຳປີຂອງຫ້ອງການປົກຄອງເມືອງຕົ້ນເຜີ້ງ, 2020).

ມາຮອດປັດຈຸບັນ, ພວກເຮົາຍັງບໍ່ສາມາດແກ້ໄຂຫຼາຍບັນຫາທາງດ້ານວັດທະນະທຳຂອງຊົນເຜົ່າທີ່ເກີດຂຶ້ນ ແລະ ຍັງບໍ່ສາມາດຊອກຫາວິທີການທີ່ຖືກຕ້ອງເໝາະສົມໃນການພັດທະນາ, ປົກປັກຮັກສາ ແລະ ສົ່ງເສີມວັດທະນະທຳໃນທົ່ວປະເທດ. ພວກເຮົາຍັງສືບຕໍ່ເມີນເສີຍ, ບໍ່ມີຄວາມກະຕືລືລົ້ນ ໃນຂະນະດຽວກັນປະເທດຊາດຂອງພວກເຮົາມີການປ່ຽນແປງໄປສູ່ເສດຖະກິດການຕະຫຼາດ. ນັ້ນແມ່ນສາເຫດທີ່ພາໃຫ້ເກີດການບໍລິຫານຄຸ້ມຄອງວຽກງານວັດທະນະທຳແບບລົ້ມເຫຼວ ພວກເຮົາຍັງຂາດບຸກຄາລາກອນອາວຸໂສ ທີ່ມີຄວາມຮູ້ຄວາມສາມາດ ຢູ່ໃນຂັ້ນທ້ອງຖິ່ນຕໍ່ກັບວຽກງານຄຸ້ມຄອງ, ພັດທະນະນາ, ປົກປັກຮັກສາ ແລະ ສົ່ງເສີມວັດທະນະທຳບັນດາເຜົ່າ. ພື້ນຖານຊີວິດດ້ານວັດທະນະທຳຂອງຄົນໃນຊຸມຊົນນັບມື້ນັບຊຸດໂຊມ ແລະ ສັງຄົມແບບເປື່ອຍເຍື່ອຍເຊື່ອມຊາມນັບມື້ນັບແຜ່ຫຼາຍໃຫ້ເຫັນ ແລະ ເຮັດໃຫ້ວັດທະນະທຳອັນດີງາມຂອງຊາດນັບມື້ນັບເຊື່ອມໂຊມ. ບົດບາດສຳຄັນທາງດ້ານວັດທະນະທຳໃນການສ້າງສາເສດຖະກິດສັງຄົມຂອງປະເທດຍັງບໍ່ທັນເປັນທີ່ຈະແຈ້ງ ສະແດງອອກໃຫ້ເຫັນການແບ່ງໜ້າທີ່ຮັບຜິດຊອບຂອງຜູ້ຄຸ້ມຄອງບໍລິຫານ ວຽກງານວັດທະນະທຳໃນແຕ່ລະຂັ້ນ. ແນ່ນອນວ່າ ມໍລະດົກວັດທະນະທຳຂອງພວກເຮົາເປັນສິ່ງທີ່ຂາດບໍ່ໄດ້, ແຕ່ມັນຍັງບໍ່ທັນໄດ້ຮັບການຂຸດຄົ້ນ, ພັດທະນາ, ປົກປັກຮັກສາ ແລະ ສົ່ງເສີມຢ່າງຖືກຕ້ອງເພື່ອຜົນປະໂຫຍດຂອງປະເທດຊາດ.

ດັ່ງນັ້ນ, ຄະນະນັກຄົ້ນຄວ້າວິໄຈ ຈຶ່ງໄດ້ດຳເນີນການຄົ້ນຄວ້າວິໄຈ ພາຍໃຕ້ຫົວຂໍ້ "ການປົກປັກຮັກສາ ແລະສົ່ງເສີມວັດທະນາທຳຂອງຊາວໄຕດຳ, ເມືອງຕົ້ນເຜິ້ງ, ແຂວງບໍ່ແກ້ວ" ເພື່ອເປັນການປົກປັກຮັກສາ ແລະ ສົ່ງເສີມວັດທະນະທຳທ້ອງຖິ່ນໃຫ້ຄົງຢູ່ຄູ່ກັບສັງຄົມລາວຕະຫຼອດໄປ. ເນື່ອງຈາກວ່າວຽກງານວັດທະນະທຳເປັນວຽກງານ ໜຶ່ງທີ່ຈຳເປັນ ແລະ ຄວນເລັ່ງດ່ວນໄດ້ຮັບການສົ່ງເສີມ ແລະ ແກ້ໄຂໃຫ້ທ່ວງທັນກັບເວລາ ຄືດັ່ງທີ່ລັດຖະບານໄດ້ອອກນະໂຍບາຍກ່ຽວກັບການປົກປັກຮັກສາ ແລະ ສົ່ງເສີມວັດທະນະທຳອັນດີງາມຂອງຊາດ ເຊິ່ງປາກົດຢູ່ໃນລັດຖະທຳມະນູນແຫ່ງ ສປປ. ລາວ (ສະບັບປັບປຸງປີ 2015, ໝວດທີ 1 ມາດຕາ 8 ປັບປຸງ ໜ້າທີ 4) ໄດ້ລະບຸໄວວ່າ "ລັດປະຕິບັດນະໂຍບາຍສາມັກຄີ ແລະ ສະເໝີພາບລະຫວ່າງຊົນເຜົ່າຕ່າງໆ. ທຸກຊົນເຜົ່າລ້ວນແຕ່ມີສິດປົກປັກຮັກສາ, ເສີມ ຂະຫຍາຍຮີດຄອງປະເພນີ ແລະ ວັດທະນະທຳອັນດີງາມຂອງຕົນ ແລະ ຊາດ. ຫ້າມທຸກການກະທຳທີ່ເປັນການແບ່ງແຍກ ແລະ ການປະພຶດທີ່ເປັນການຈຳແນກລະຫວ່າງຊົນເຜົ່າ". ນອກຈາກນັ້ນໃນ (ມາດຕາ 23 ໜ້າ 7-8) ຍັງກ່າວອີກວ່າ "ລັດສົ່ງເສີມການປົກປັກຮັກສາວັດທະນະທຳທີ່ເປັນເອກະລັກ ແລະ ເປັນມູນເຊື້ອອັນດີງາມຂອງຊາດ ແລະ ຂອງຊົນເຜົ່າ ສົມທົບກັບການຮັບເອົາວັດທະນະທຳຂອງໂລກຢ່າງມີການເລືອກເຟັ້ນ; ລັດສົ່ງເສີມການເຄື່ອນໄຫວວັດທະນະທຳ, ສິລະປະວັນນະຄະດີ, ການປະດິດແຕ່ງ, ການຄຸ້ມຄອງ ແລະ ປົກປັກຮັກສາມໍລະດົກທາງວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ, ບູລະນະປະຕິສັງຂອນວັດຖຸບູຮານ ແລະ ປູສະນີຍະສະຖານ".

ສະນັ້ນ, ເພື່ອເປັນການປົກປັກຮັກສາ ແລະ ສົ່ງເສີມວັດທະນະທຳອັນດີງາມຊາວໄຕດຳໃນ ສປປ. ລາວ ທີມງານນັກຄົ້ນຄວ້າຈຶ່ງໄດ້ດຳເນີນໂຄງການຄົ້ນຄວ້າວິໄຈ ເພື່ອເຜີຍແຜ່ໃຫ້ສັງຄົມໄດ້ເຂົ້າໃຈຮີດຄອງປະເພນີ ອັນເປັນເອກະລັກສະເພາະຂອງຊາວໄຕດຳໃນ ສປປ. ລາວ.

*1.2 ຄຳຖາມຂອງການຄົ້ນຄວ້າ*

1) ຊາວໄຕດຳມີຮີດຄອງປະເພນີອັນໃດແດ່ ແຕ່ລະປະເພນີນັ້ນມີການປະຕິບັດຄືແນວໃດ?

2) ຊາວໄຕດຳມີວິທີການປົກປັກຮັກສາ ແລະ ສົ່ງເສີມວັດທະນະທຳຂອງຊາວໄຕຕົນຄືແນວໃດ?

3) ມັນມີຄວາມແຕກຕ່າງກັນບໍ່ດ້ານວິທີການປົກປັກຮັກສາ ແລະ ສົ່ງເສີມວັດທະນະທຳຂອງຊາວໄຕດຳໂດຍອີງໃສ່ບ້ານ, ອາຍຸ ແລະ ເພດ**?**

*1.3 ຈຸດປະສົງຂອງການຄົ້ນຄວ້າ*

1) ເພື່ອອະທິບາຍພິທີກຳການເສັນເຮືອນ, ປາດໂຕງເຂົ້າໃໝ່ ແລະ ກຳບ້ານ

2) ເພື່ອອະທິບາຍວິທີການປົກປັກຮັກສາ ແລະ ສົ່ງເສີມວັດທະນະທຳຂອງຊາວໄຕດຳ.

3) ເພື່ອພິສູດ ແລະ ອະທິບາຍຄວາມແຕກຕ່າງໃນດ້ານວິທີການປົກປັກຮັກສາ ແລະ ສົ່ງເສີມວັດທະນະທຳຂອງເຜົ່າໄຕດຳໂດຍອີງໃສ່ເພດຍິງຊາຍ, ບ້ານຢູ່ອາໄສ ແລະ ອາຍຸ.

## 2. ບົດຄົ້ນຄວ້າທີ່ກ່ຽວຂ້ອງ

ທ່ານ Tunming ພ້ອມຄະນະ (2014) ໄດ້ຄົ້ນຄວ້າວິໄຈແບບຄຸນນະພາບ ກ່ຽວກັບເລື່ອງການພັດທະນາຍຸດທະສາດການທ່ອງທ່ຽວທາງອາຫານຕາມເອກະລັກຊົນເຜົ່າພື້ນເມືອງຂອງໄຕດຳ, ຊຶ່ງສະແດງໃຫ້ເຫັນວ່າ, ການນຳອາຫານໄປຖະຫວາຍຜີໃນວັນພິເສດຂອງເຜົ່າໄຕດຳ, ການໄຫວ້ບູຊາຜີປູ່ຍ່າຕາຍາຍ, ຜີເຮືອນ, ຕ້ອນຮັບດວງວິນຍານຈາກຟ້າແຖນ, ຖວາຍເຂົ້າ, ຊີ້ນໝູ ແລະ ເຫຼົ້າຢາຫານັງ ແມ່ນຈຸດປະສົງຕົ້ນຕໍ ຂອງພິທີກຳທີ່ເປັນເອກະລັກສະເພາະ (unique rituals) ສຳລັບພິທີກຳປາດໂຕງເຂົ້າໃໝ່, ພິທີກຳເສັນເຮືອນ, ພິທີກຳບ້ານທີ່ຊາວໄຕດຳເຊື່ອວ່າ ເຈົ້າພາບມີພະລັງອຳນາດວິເສດເຊັ່ນ: ເທວະດາຟ້າແຖນຈະດູແລເບິ່ງແຍງບ້ານເມືອງ, ປົກປັກຮັກສາຊາວບ້ານໃຫ້ມີຄວາມສະຫງົບປອດໄພ ແລະ ມີຄວາມສຸກ ແລະ ສ້າງຮັ່ງຄູນມີໃນການປູກຝັງການລ້ຽງ ແລະ ທຸລະກິດກະສິກຳອື່ນໆ.

ທ່ານ Chansri ແລະ ທ່ານ Burusphat (2017) ໄດ້ດຳເນີນຄົ້ນຄວ້າກໍລະນີສຶກສາດ້ານຄຸນນະພາບ ເລື່ອງຂັບໄຕດຳ (Black Tai Folksongs) ກ່ຽວກັບ ການປົກປັກຮັກສາ ແລະ ດັດສົມວັດທະນະທຳດົນຕີ ເພື່ອການຮັກສາເອກະລັກຂອງຊົນເຜົ່າ ໂດຍການເກັບກຳຂໍ້ມູນຈາກຊາວໄຕດຳ ທີ່ອາໄສຢູ່ (ສາມບ້ານໄທດຳໃນແຂວງຫຼວງນ້ຳທາ ສປປ ລາວ), (ເມືອງແຖງ ຫຼື ດ້ຽນບຽນຟູ, ແຂວງເຊີນລາ ສສ. ຫວຽດນາມ) ແລະ ໄທ (ເມືອງເຂົາຍອຍ ແຂວງເພັດສະບູລີ ຣາຊະອານາຈັກໄທ) ໄດ້ຖືກຄັດເລືອກເຂົ້າໃນການສຶກສາຄົ້ນຄວ້າ, ເຊິ່ງພົບວ່າ ໄຕດຳເນີນພິທີການເຮັດພິທີກຳເສັນ ເຮືອນ, ພິທີກຳບ້ານ ຫຼື ພິທີລ້ຽງຜີເຮືອນ (Sen-Ruen ritual, The Liang-Chao-Baan ritual or house-raising ritual) ແມ່ນມີຈຸດປະສົງຕາມຄວາມເຊື່ອທາງສາສະໜາຜີ (animistic spirit beliefs) ທີ່ເປັນສ່ວນໜຶ່ງຂອງປະເພນີວັດທະນະທຳໄຕດຳ. ຊາວໄຕດຳມີຄວາມເຊື່ອທີ່ວ່າ "ຜີຟ້າ" ຫຼື "ເທວະດາ" ເຊື່ອກັນວ່າ ເທວະດາເປັນຜູ້ສ້າງໂລກ ແລະ ເປັນແຮງບັນດານໃຈໃຫ້ວິນຍານບັນພະບຸລຸດ ເອີ້ນວ່າ "ຜີເຮືອນ". ດັ່ງນັ້ນ, ຜີຈຶ່ງຖືກນິລະນາມວ່າ ເປັນສິ່ງມະຫັດສະຈັນ.ເຊິ່ງຕາມຄວາມເຊື່ອວ່າສາມາດປົກປ້ອງສະມາຊິກໃນຊຸມຊົນຈາກໄພອັນຕະລາຍ ແລະ ເຮັດໃຫ້ພວກເຂົາມີຊີວິດຄວາມສະຫງົບປອດໄພ ແລະ ມີຊີວິດຊີວາ.

ຜົນການຄົ້ນຄວ້າຂອງພວກທ່ານຍັງພົບວ່າ ການອະນຸລັກວັດທະນະທຳບັນດາຊົນເຜົ່າຄື ການປູກຈິດສຳນຶກດ້ານວັດທະນະທຳຂອງເຂົາເຈົ້າໃຫ້ແກ່ລູກຫຼານ ດ້ວຍການສະໜັບສະໜູນຈາກພາກລັດ ແລະ ເອກະຊົນໃນຊຸມຊົນ, ຍົກສູງຄວາມຮັບຮູ້ດ້ານວັດທະນະທຳ, ຄວາມຊົງຈຳທາງປະຫວັດ ສາດ, ຄວາມສາມັກຄີ. ພາຍໃຕ້ສະພາບແວດລ້ອມທີ່ມີການປ່ຽນແປງ, ຊາວໄຕດຳປັບປຸງ ແລະ ດັດສົມຕົວເອງ ແລະ ສ້າງຂະບວນການປົກປັກຮັກສາວັດທະນະທຳຜ່ານບັນດາບົດເພງພື້ນເມືອງ ເພື່ອຮັກສາເອກະລັກສະເພາະໃນສັງຄົມປັດຈຸບັນ.

ຜົນການຄົ້ນຄວ້າຂອງທ່ານພົບວ່າ ການສ້າງເວທີທາງດ້ານວັດທະນະທຳ ໂດຍການຈັດງານວາງສະແດງວັດທະນະທຳ ສິລະປະວັນນະຄະດີ ສຳລັບຊົນເຜົ່ານັ້ນ ແມ່ນວິທີໜຶ່ງສຳຄັນໃນການສົ່ງເສີມວັດທະນະທຳ ໂດຍການສະແດງອອກ ຜ່ານສຽງດົນຕີ, ບົດຟ້ອນ, ບົດເພງ ແລະ ຂັບລຳ; ການນຸ່ງຖືແຕ່ງກາຍ ດ້ວຍຫຼາຍຮູບຫຼາຍສີ ທີ່ເປັນເອກະລັກ ຜ່ານທາງເຕັກໂນໂລຊີໃນຍຸກເສດຖະກິດດິຈິຕອນ.

ການຄົ້ນຄວ້າແບບຄຸນນະພາບຂອງທ່ານ Phon-ngam (2016) ກ່ຽວກັບເລື່ອງປະເພນີການຖັກແສ່ວ ແລະ ການນຸ່ງຖືຂອງຊົນເຜົ່າໄຕດຳ ຈາກບ້ານວັດທະນະທຳທີ່ຕັ້ງຢູ່ ບ້ານນາປ່າຫາດ ຕຳບົນເຂົາຂຽວ ເມືອງຊຽງຄານ ແຂວງເລີຍ ປະເທດໄທ. ຜົນການຄົ້ນຄວ້າຂອງທ່ານພົບວ່າ ພິທີກຳທີ່ເອີ້ນວ່າ "ປາດໂຕງເຂົ້າໃໝ່" ແມ່ນເອົາອາຫານຖວາຍໃຫ້ຜີບັນພະບຸລຸດ, ຜີເຈົ້າກົກເຈົ້າເລົ່າ (penates), ພິທີກຳທີ່ເອີ້ນວ່າ "ເສັນເຮືອນ" ກໍມີຄວາມໝາຍອັນດຽວກັນຄື: ເອົາເຂົ້າ, ປາ ແລະ ອາຫານຫວານຄາວ ເຄື່ອງບູຊາທັງໝົດຖວາຍໃຫ້ຜີບັນພະບຸລຸດ ຜີເຈົ້າກົກເຈົ້າເລົ່າ (penates) ເພາະວ່າການດຳລົງຊີວິດຢູ່ໃນໂລກນີ້, ໄຕດຳ ມີຄວາມເຊື່ອວ່າ ເທວະດາຟ້າແຖນ ເປັນເທບພະເຈົ້າ ຫຼື ເທວະດາ ເປັນຜູ້ຮັກສາບ້ານ, ປົກປ້ອງຄວາມສະຫງົບສຸກຂອງຜູ້ຢູ່ອາໄສ, ການເດີນທາງອອກນອກບ້ານໄປເຮັດວຽກຢູ່ບ່ອນອື່ນ, ການເຮັດແບບນີ້ ຕໍ່ຜີບັນພະບຸລຸດ ເພາະເຊື່ອວ່າຈະບໍ່ອຶດຫິວ ແລະ ເຮັດໃຫ້ລູກຫຼານຮັ່ງມີ. ສະນັ້ນ, ໄຕດຳ ຈຶ່ງຈັດຕັ້ງພິທີກຳເຫຼົ່ານີ້ທຸກໆປີ.

ຜົນການຄົ້ນຄວ້າຂອງທ່ານພົບວ່າ ຮີດຄອງປະເພນີຂອງເຜົ່າໄຕດຳສາມາດປົກປັກຮັກສາຮັກສາ ແລະ ສົ່ງເສີມ ຖ້າຄົນໃນຊຸມຊົນມີຄວາມເພີ່ມທະວີ ການຮຽນຮູ້ແຫຼ່ງວັດທະນະທຳ, ພິທີກຳ ແລະ ຮີດຄອງປະເພນີ ທີ່ເປັນເອກະລັກສະເພາະຂອງຊາວໄຕດຳ, ເຜີຍແຜ່ວັດທະນະທຳຢ່າງກວ້າງຂວາງ ແລະ ສ້າງແຮງດຶງດູດຫຼາຍເທົ່າທີ່ເປັນໄປ ກ່ຽວກັບກິດຈະກຳດ້ານວັດທະນະທຳຂອງຊຸມຊົນໄຕດຳ ເຊິ່ງກວມເອົາບັນດາຮີດຄອງປະເພນີອັນກວ້າງຂວາງ (ວັດທະນະທຳ, ປະເພນີ ແລະ ວິຖີຊີວິດ ເຊັ່ນ: ເຮືອນ, ວິຖີຊີວິດ, ການຫຼິ້ນ, ພາສາ, ການຖັກແສ່ວ, ການນຸ່ງຖື, ອາຫານການກິນ ແລະ ຈັດງານພິທີກຳຂອງເຜົ່າໄຕດຳ).

ທ່ານ Chaigasem ແລະ Tunming (2021) ດຳເນີນການຄົ້ນຄວ້າແບບວິທີປະສົມ ກ່ຽວກັບເລື່ອງນະວັດຕະກຳການຄຸ້ມຄອງ ການທ່ອງທ່ຽວທາງດ້ານກະສິກຳ ໂດຍອີງໃສ່ເອກະລັກຂອງຊົນເຜົ່າໄຕດຳຂອງໄທ ພົບວ່າຜົນການຄົ້ນຄວ້າຄັ້ງນີ້ ສອດຄ່ອງກັບຜົນການຄົ້ນຄວ້າຄຸນນະພາບ ແບບກໍລະນີສຶກສາໂດຍທ່ານ Chansri and Burusphat (2017:20) ກ່ຽວກັບເລື່ອງການປົກປັກຮັກສາ ແລະ ດັດສົມວັດທະນະທຳດົນຕີ ເພື່ອການຮັກສາເອກະລັກຂອງຊົນເຜົ່າ. ເກັບກຳຂໍ້ມູນຈາກຊາວໄທດຳທີ່ອາໄສຢູ່ (ສາມບ້ານໄທດຳ ໃນແຂວງຫຼວງນ້ຳທາ ສປປ ລາວ), (ເມືອງແຖງ ຫຼື ດ້ຽນບຽນຟູ, ແຂວງເຊີນລາ ສສ. ຫວຽດນາມ) ແລະ ໄທ (ເມືອງເຂົາຍອຍ ແຂວງເພັດສະບູລີ ລາຊະອານາຈັກໄທ) ໄດ້ຖືກຄັດເລືອກເຂົ້າໃນການສຶກສາຄົ້ນຄວ້າ. ຜົນການຄົ້ນຄວ້າຂອງພວກທ່ານພົບວ່າ ການອະນຸລັກວັດທະນະທຳບັນດາຊົນເຜົ່າຄື ການປູກຈິດສຳນຶກດ້ານວັດທະນະທຳຂອງເຂົາເຈົ້າໃຫ້ແກ່ລູກຫຼານ ດ້ວຍການສະໜັບສະໜູນຈາກພາກລັດ ແລະ ເອກະຊົນໃນຊຸມຊົນ, ຍົກສູງຄວາມຮັບຮູ້ດ້ານວັດທະນະທຳ, ຄວາມຊົງຈຳທາງປະຫວັດສາດ, ຄວາມສາມັກຄີ. ພາຍໃຕ້ສະພາບແວດລ້ອມທີ່ມີການປ່ຽນແປງ, ຊາວໄຕດຳປັບປຸງ ແລະ ດັດສົມຕົວເອງ ແລະ ສ້າງຂະບວນການປົກປັກຮັກສາວັດທະນະທຳຜ່ານບັນດາບົດເພງພື້ນເມືອງ ເພື່ອຮັກສາເອກະລັກສະເພາະໃນສັງຄົມປັດຈຸບັນ.

ຜົນການຄົ້ນຄວ້າຍັງພົບວ່າ ການຊຸກຍູ້ສົ່ງເສີມໃຫ້ປະຊາຊົນໄດ້ ຮຽນຮ່ອງຮອຍປະຫວັດສາດຂອງເຜົ່າໄຕດຳເຊັ່ນ: ອາຫານ, ການປຸງແຕ່ງ, ຮີດຄອງປະເພນີ, ເຄື່ອງນຸ່ງ, ຫັດຖະກຳ, ແບບເຮືອນ, ສັງຄົມ, ພິທີກຳ, ນິທານເລື່ອງຄວາມ ເຊື່ອ, ຈິດຕະກຳ, ດົນຕີ, ລະຄອນ, ພາສາ, ວັນນະຄະດີ ແມ່ນວິທີທີ່ມີປະໂຫຍດສຳລັບຮັກສາ ແລະ ເສີມຂະຫຍາຍເອກະລັກຂອງຊົນເຜົ່າໄທດຳ.

## 3. ວິທີດຳເນີນການຄົ້ນຄວ້າ

ນຳໃຊ້ການຄົ້ນຄວ້າ ຮູບແບບປະສົມວິທີ (ຮູບແບບປະລິມານ + ຮູບແບບຄຸນນະພາບ ຫຼື Quantitative + Qualitative Approach). ສະນັ້ນ, ມີການເກັບກຳ, ວິເຄາະຂໍ້ມູນ ການຄົ້ນຄວ້າ ຮູບແບບຄຸນນະພາບ ແລະ ຮູບແບບປະລິມານ (Creswell, ປີ 2012 & 2014). *3.1 ການຄົ້ນຄວ້າ*

*3.1 ແບບປະລິມານ*

*3.1.1 ປະຊາກອນ ແລະ ກຸ່ມຕົວຢ່າງ*

ເປົ້າໝາຍປະຊາກອນການຄົ້ນຄວ້າ ແມ່ນເຜົ່າໄຕດຳທີ່ຢູ່ແຂວງບໍ່ແກ້ວ ເມືອງຕົ້ນເຜິ້ງຈຳນວນ 5 ບ້ານຄື: ບ້ານນາກິງ,

ບ້ານນ້ຳແງ້ນ, ບ້ານຕົ້ນເຜີ້ງ, ບ້ານສີເມືອງງາມ ແລະ ບ້ານນ້ຳເກິ່ງ. ຈຳນວນ 109 ຄົນ.

*3.1.2 ເຄື່ອງມືທີ່ໃຊ້ເຂົ້າໃຈການເກັບຂໍ້ມູນ*

ແມ່ນການຢາຍແບບສອບຖາມ ຈຳນວນ 109 ຢູດ ໃຫ້ປະຊາຊົນເຜົ່າໄຕດຳ ແລະ ໄດ້ຮັບແບບສອບຖາມກັບຄືນຈຳນວນ 109 ສະບັບ. ປະຊາຊົນເຜົ່າໄຕດຳ ເຂົ້າຮ່ວມໃຫ້ຂໍ້ມູນແບບເປັນຜູ້ສະໝັກໃຈ. ຂໍ້ມູນທັງໝົດໄດ້ຮອບຮວມເຂົ້າກັນ ເພື່ອຫຼີກເວັ້ນການໄຈ້ແຍກຂໍ້ມູນແຕ່ລະຄົນ.

*3.1.3 ວິທີການເກັບກຳຂໍ້ມູນ*

ທີມງານນັກຄົ້ນຄວ້າໄດ້ປະສານໄປຫາພະແນກຖະແຫຼງຂ່າວວັດທະນະທຳ ແລະ ທ່ອງທ່ຽວຂອງແຂວງ ທາງແຂວງໄດ້ເຮັດໜັງສືແຈ້ງການໄປຫາຂັ້ນເມືອງ ແລະ ຂັ້ນເມືອງໄດ້ນຳສົ່ງນັກວິຊາການເຂົ້າຮ່ວມຕິດຕາມນຳທີມງານນັກຄົ້ນຄວ້າ 1 ທ່ານ. ຫຼັງຈາກໄປຮອດບ້ານໄດ້ເຂົ້າພົບອຳນາດການປົກຄອງບ້ານໃຫ້ປະກາດໂທລະໂຄ່ງໃຫ້ຊາວບ້ານເຂົ້າມາເຕົ້າໂຮມກັນຢູ່ເຮືອນນາຍບ້ານ ບາງບ້ານກໍເຕົ້າໂຮມຢູ່ຫ້ອງການບ້ານ ເມື່ອທຸກຄົນມາຄົບແລ້ວທີມງານນັກຄົ້ນກໍໄດ້ຢາຍແບບສອບຖາມໃຫ້ແຕ່ລະຄົນຕອບ. ສ່ວນຜູ້ທີ່ອ່ານໜັງສືບໍ່ໄດ້ ຫຼື ຜູ້ເຖົ້າຜູ້ແກ່ທີ່ແສງຕາບໍ່ຄ່ອຍດີອ່ານໜັງສືບໍ່ໄດ້ ນັກຄົ້ນຄວ້າກໍຈະເປັນຜູ້ອ່ານຄຳຖາມ ແລະ ໝາຍທີກເອົາ (✓) ຄຳຕອບຂອງເພິ່ນ. ນອກຈາກນັ້ນກໍໄດ້ຍ່າງເລາະໄປສອບຖາມນຳແຕ່ເຮືອນຕື່ມອີກ (ລະດັບຄວາມຄິດເຫັນຕໍ່ກັບເຫັນດີ ຫຼື ບໍ່ເຫັນດີ (ຈາກລະດັບ 5 = ເຫັນດີທີ່ສຸດ ຫາລະດັບ 1 = ບໍ່ເຫັນດີທີ່ສຸດ) ໄລຍະເວລາໃນການລົງເກັບຂໍ້ມູນນັ້ນແມ່ນເລີ່ມແຕ່ວັນທີ 17-20 ພະຈິກ 2020

*3.1.4 ວິທີການວິເຄາະຂໍ້ມູນ*

ການວິເຄາະຂໍ້ມູນແມ່ນໄດ້ນຳໃຊ້ໂປຣແກມ SPSS ເຊິ່ງໄດ້ແຍກການວິເຄາະອອກເປັນ 3 ໄລຍະດັ່ງນີ້:

ໄລຍະ 1 ວິເຄາະຂໍ້ມູນ ຮູບແບບອະທິບາຍສະຖິຕິອັດຕາສ່ວນ (DESCRIPTIVE SAMPLE STATISTICS)

ໃນໄລຍະທຳອິດ, ການວິເຄາະຂໍ້ມູນ ຮູບແບບອະທິບາຍສະຖິຕິອັດຕາສ່ວນ (descriptive sample statistics)ກ່ຽວກັບຄຸນລັກສະນະກຸ່ມຕົວຢ່າງຂອງຜູ້ເຂົ້າຮ່ວມ ໂດຍໃຊ້ຕາຕະລາງສະແດງຟຣີເຄັນຊີ ຈາກການວິເຄາະຜົນ ເຊັນໂທເທັນເດັນຊີ ອອບເອີດິສທຣິບບຸເຊິນ (central tendency of a distribution), ເຣັນຊ໌ (ranges) ທີ່ວັດແທກ ດິສເປີເຊິນ ອິນເອີ ຟີເກັນຊີດິສທຣິບບຸເຊິນ (dispersion in a frequency distribution) ປະກອບມີພາຣາແມັດທຣິກວາລູ (parametric value) ເຊັ່ນ: ມີນ (mean), ສະແຕນດາດດີວິເອເຊິນ (the standard deviation) ຫຼື ວາຣີອັນ (variance) ກ່ຽວກັບເນື້ອໃນດ້ານຄຸນລັກສະນະສ່ວນຕົວ, ຈຸດປະສົງການເຮັດພິທີກຳເສັນເຮືອນ, ປາດໂຕງເຂົ້າໃໝ່, ກຳບ້ານ, ກິດຈະກຳກ່ອນມື້ປະກອບພິທີກຳ, ກິດຈະກຳໃນມື້ປະກອບພິທີກຳ ແລະ ກິດຈະກຳຫຼັງຈາກສຳເລັດພິທີກຳ ເສັນເຮືອນ, ປາດໂຕງເຂົ້າໃໝ່ ແລະ ກຳບ້ານ. ດ້ານການປົກປັກຮັກສາ ແລະ ສົ່ງເສີມວັດທະນະທຳຄວາມເຊື່ອຖືພິທີກຳກຳບ້ານ ດ້ານເນື້ອໃນເຫຼົ່ານີ້ແມ່ນນຳໃຊ້ຢູ່ໃນການວິເຄາະຂໍ້ມູນໄລຍະທີ 2.

ໄລຍະ 2 ວິເຄາະຂໍ້ມູນນຳໃຊ້ສູດເດີແມນວິດນີ (the Mann-Whitney test)

ໃນການຄົ້ນຄວ້າຄັ້ງນີ້, ແມ່ນການນຳໃຊ້ສູດເດີແມນວິດນີ (the Mann-Whitney test) ສົມທຽບລຳດັບ (ranks) ຂອງສອງກຸ່ມ (two groups) ເພື່ອກວດສອບເບິ່ງຖ້າລຳດັບສູງ ແລະ ຕ່ຳທີ່ມີຮ່ວມກັນນັ້ນແຕກຕ່າງກ◌ັນ ແລະ ຕ້ອງເປັນຕົວກຳນົດຄອນທີນິວອັດສ໌ຢູ່ໃນເກນບໍ່ປ◌ົກກະຕິ.

ໄລຍະ 3 ວິເຄາະຂໍ້ມູນນຳໃຊ້ສູດເດີຄຣັສໂຄ-ວໍລິສ (the Kruskal-Wallis test)

ການວິເຄາະຂໍ້ມູນໂດຍການນຳໃຊ້ສູດເດີຄຣັສໂຄ-ວໍລິສ (the Kruskal-Wallis test) ສົມທຽບລຳດັບ (ranks) ຂອງຫຼາຍກຸ່ມ (multiple groups) ເພື່ອກວດສອບເບິ່ງຖ້າລຳດັບສູງ ແລະ ຕ່ຳທີ່ມີຮ່ວມກັນນັ້ນແຕກຕ່າງກ◌ັນ (Field, 2009). ຂັ້ນຕອນສ◌ຸດທ້າຍ, ແມ່ນການດຳເນີນການວິເຄາະ ເພື່ອພິສູດຂໍ້ສົມຖານກ່ຽວກັບຄວາມແຕກຕ່າງລະຫວ່າງສອງກຸ່ມ ແລະ ຫຼາຍກຸ່ມທີ່ຕັ້ງໄວ້.

*3.2 ການຄົ້ນຄວ້າແບບຄຸນນະພາບ*

*3.2.1 ວິທີການເກັບກຳຂໍ້ມູນ*

ຄະນະນັກຄົ້ນຄວ້າ ສ້າງ 2 ຄຳຖາມສຳພາດລວມ ແລະ ມີຄຳຖາມເຈາະຈົ້ມສະເພາະ ການສຳພາດໄດ້ດຳເນີນ ໃນວັນທີ 22 ເດືອນພະຈິກ ປີ 2020. ການສຳພາດແບ່ງອອກເປັນ 3 ກຸ່ມສະເພາະໃຊ້ເວລາສະເລ່ຍປະມານ 25 ນາທີ ໃນການຊັກຖາມບັນດາທ່ານໃນກຸ່ມຜູ້ອາວຸໂສຊາຍ, ກຸ່ມສະຫະພັນແມ່ຍິງ ແລະ ກຸ່ມຊຸ່ນໜຸ່ມ.

ສຳລັບພິທີການສຳພາດ (interview protocol), ຄະນະນັກຄົ້ນຄວ້າມີການປະສານງານກັບຜູ້ເຂົ້າຮ່ວມ, ມີການກະກຽມອຸປະກອນຈຳເປັນ, ຈັດກຽມຂັ້ນຕອນການສຳພາດ, ໃຫ້ຄຳແນະນຳ ແລະ ທົດສອບຄຳຖາມສຳພາດ, ມີການສົ່ງໜັງສືປະຕິຍານ (an informed consent letter) ໃຫ້ຜູ້ເຂົ້າຮ່ວມສຳພາດໄດ້ລົງລາຍເຊັນ ແລະ ສົ່ງໜັງສືປະຕິຍານຄືນໃຫ້ແກ່ນັກຄົ້ນຄວ້າ ເພື່ອຮັບປະກັນໃຫ້ແກ່ການສຳພາດ.

*3.2.2 ວິທີການວິເຄາະຂໍ້ມູນ*

ການວິເຄາະຂໍ້ມູນແບບຄຸນນະພາບ ແມ່ນອີງໃສ່ 4 ຂັ້ນຕອນຂອງການວິເຄາະຂໍ້ມູນ ແບບຄຸນນະພາບ ແນະນຳໂດຍ ທ່ານ Cresswell (2014) ດັ່ງນີ້:

ຂັ້ນຕອນທີ 1. ຈັດກຸ່ມ ແລະ ກະກຽມຂໍ້ມູນເພື່ອວິເຄາະ. ລວມມີການຂຽນບົດສຳພາດອອກຈາກເຄື່ອງອັດສຽງ, ກວດເບິ່ງອຸປະກອນ, ພິມບົດບັນທຶກພາກສະໜາມ, ຈັດປະເພດ ແລະ ຈັດລຽນຂໍ້ມູນເປັນໝວດແຕກຕ່າງຕາມປະເພດຕ່າງໆ.

ຂັ້ນຕອນທີ 2. ອ່ານ ຫຼື ກວດເບິ່ງຂໍ້ມູນທັງໝົດ. ທຳຄວາມເຂົ້າໃຈພາບລວມຈາກຂໍ້ມູນ ແລະ ນຶກຄິດເຖິງຄວາມໝາຍລວມ.

ຂັ້ນຕອນທີ 3. ໃສ່ລະຫັດຂໍ້ມູນທັງໝົດ. ການໃສ່ລະຫັດ ແມ່ນຂະບວນການຈັດໝວດຂໍ້ມູນ ໂດຍການ ແຍກປະໂຫຍກຄຳເວົ້າ ເປັນວັກແຕ່ລະຢ່າງ (ແຍກອອກເປັນເລື່ອງ) ແລະ ຂຽນຄຳສັບ ເປັນຄຳແທນຊື່ໝວດຂອງຂໍ້ມູນໃສ່ໃນຫວ່າງຂອບເຈ້ຍ. ການວິເຄາະລວມມີການແຍກອອກເປັນປະໂຫຍກ ຫຼື (ເປັນວັກ) ໃຫ້ເປັນໝວດຄວາມ ແລະ ໃສ່ຊື່ (labeling) ໝວດ.

ຂັ້ນຕອນທີ 4. ຂຽນບົດອະທິບາຍການສຳພາດ ຮູບແບບເລົ່າເລື່ອງ ອີງຕາມທ່ານ Cresswell (2014), ຈຳນວນຫົວເລື່ອງ (themes) ຄວນມີລະຫວ່າງ 5 ຫາ 7 ຫົວເລື່ອງ ສຳລັບໂຄງການຄົ້ນຄວ້າໜຶ່ງ. ສຳລັບການຄົ້ນຄວ້າຄັ້ງນີ້, ມີການຈັດແບ່ງຄຳຕອບຈາກຄຳຖາມສຳພາດ ເປັນ 3 ຫົວເລື່ອງ (themes) ຫຼື ໝວດ (patterns).

## 4. ຜົນການຄົ້ນຄວ້າ

ຜົນວິເຄາະຈາກການສຳພາດ ແລະ ແບບສອບຖາມພົບວ່າ: ຈຸດປະສົງການເຮັດພິທີກຳຕາມຂະໜົບທຳນຽມຮີດຄອງປະເພນີຂອງຊາວໄຕດຳ (ພິທີກຳເສັນເຮືອນ, ປາດໂຕງເຂົ້າໃໝ່, ພິທີກຳກຳບ້ານ) ແມ່ນເພື່ອສືບທອດປະຕິບັດຮີດຄອງປະເພນີອັນດີງາມຂອງຊົນເຜົ່າເວົ້າລວມ ເວົ້າສະເພາະ ເພື່ອລ້ຽງຜີ ເຮືອນ, ຜີພໍ່ຜີແມ່, ຜີປູ່ຍ່າຕາຍາຍ, ຜີຍາດພີ່ນ້ອງ, ຜີບັນພະບຸລຸດ ເທວະດາຟ້າແຖນ ແລະ ເຮັດໃຫ້ລູກຫຼານໃນຕະກຸນຢູ່ດີມີແຮງ ແລະ ມີອາຍຸໝັ້ນຍືນຍາວ ແລະ ປາສະຈາກໂລກໄພເຄາະຮ້າຍທັງປວງ. ພ້ອມນັ້ນ, ຍັງພົບວ່າ: ກິດຈະກຳທີ່ໜ້າສົນໃຈໃນມື້ກ່ອນ, ໄລຍະ ແລະ ຫຼັງຈາກເຮັດພິທີກຳ (ເສັນເຮືອນ, ປາດໂຕງເຂົ້າໃໝ່ ແລະ ກຳບ້ານ) ຂອງຊາວໄຕໄຕດຳ. ສຳລັບພິທີກຳເສັນເຮືອນ ມີການກະກຽມເຄື່ອງດື່ມອາຫານ, ຈັດອາຫານຫວານຄາວ, ເຂົ້າເໝົ້າເຂົ້າຮາງ, ຮັບປະທານອາຫານຮ່ວມກັບຍາດພີ່ນ້ອງ. ສຳລັບພິທີກຳປາດໂຕງເຂົ້າໃໝ່ມີກະກຽມເຄື່ອງດື່ມອາຫານ, ຈັດອາຫານຫວານຄາວ, ເຂົ້າເໝົ້າເຂົ້າຮາງ, ຈັດແຕ່ງພາເຂົ້າອາຫານຫວານ ຄາວ, ເຫຼົ້າຂາວ ແລະ ນ້ຳດື່ມຍໍໄປໄວ້ກະລໍ່ຫ້ອງ. ຮັບປະທານອາຫານຮ່ວມກັບຍາດຕິພີ່ນ້ອງ. ສຳລັບພິທີກຳ (ເສັນເຮືອນ, ປາດໂຕງເຂົ້າໃໝ່ ແລະ ກຳບ້ານ) ມີການກະກຽມເຄື່ອງດື່ມອາຫານ, ຈັດອາຫານຫວານຄາວ, ເຂົ້າເໝົ້າເຂົ້າຮາງ, ຈັດແຕ່ງພາເຂົ້າອາຫານຫວານຄາວ, ເຫຼົ້າຂາວ ແລະ ນ້ຳດື່ມຍໍໄປໄວ້ຫໍຜີບ້ານເພື່ອລ້ຽງຜີບ້ານ, ສານຕາແຫຼວປັກອ້ອມບ້ານ; ແກ່ກະໂຫງໄມ້, ຕີຄ້ອງ, ຕີກອງ, ຕີແສ່ງ, ຕີໂກ່ງໃຫຍ່, ແຫ່ໄປຕາມແຕ່ລະເຮືອນ, ຫຼິ້ນໝາກຄ່າງ, ຫຼິ້ນໝາກແລ້ (ໝາກບ້າ) ແລະ ຫຼິ້ນໝາກຄອນ.

ຮູບທີ 1: ລູກຊາຍກຳລັງອະນາໄມກະຫໍ່



ຮູບທີ 2: ໄຕ້ (ເປັນຕົວແທນຂອງບັນດາລູກຫຼານທີ່ເປັນເພດຊາຍ)



ຮູບທີ 3: ໝູຕົ້ມ ແລະ ອື່ນໆ ເປັນພາເຂົ້າຂອງບັນດາລູກຊາຍເຮັດເພື່ອລ້ຽງຜີເຮືອນ



ຮູບທີ 4: ໝໍຕໍາມກໍາລັງຕໍາມຜີເຮືອນ



ນອກນັ້ນຍັງພົບວ່າ ຊາວໄຕດໍາປົກປັກຮັກສາຮັກສາມໍລະດົກວັດທະນະທໍາຂອງຕົນ ໂດຍການຮຽນຮູ້ດ້ານວັດທະນະທໍາ, ປະເພນີ ແລະ ວິຖີຊີວິດເຊັ່ນ: ເຮືອນ, ວິຖີຊີວິດ, ການຫຼິ້ນ, ພາສາ, ການຖັກແສ່ວ, ການນຸ່ງຖື, ອາຫານການກິນ ແລະ ຈັດງານພິທີກໍາຂອງຊາວໄຕດໍາຢ່າງທົ່ວເຖິງ; ການປູກຈິດສໍານຶກດ້ານວັດທະນະທໍາຂອງເຂົາເຈົ້າໃຫ້ລູກຫຼານ ເຊິ່ງເປັນຜູ້ສືບທອດ. ຄຽງຄູ່ກັນນັ້ນ, ການເຜີຍແຜ່ວັດທະນະທໍາໃນຮູບແບບສິລະປະການສະແດງໃນໂອກາດງານສໍາຄັນຕ່າງໆ ແມ່ນການສົ່ງເສີມວັດທະນະທໍາຂອງຕົນ, ກໍຄືໃຫ້ພາກເອກະຊົນເຂົ້າມາມີບົດບາດດ້ວຍການສ້າງຄວາມເຂັ້ມແຂງໃຫ້ແກ່ວັດທະນະທໍາທ້ອງຖິ່ນ. ພ້ອມນັ້ນ. ກໍຍັງມີການດັດສົມ ແລະພັດທະນາບາງພິທີກໍາໃຫ້ເໝາະສົມກັບສະພາບຂອງສັງຄົມປັດຈຸບັນ; ສ້າງກິດຈະກໍາສົ່ງເສີມວັດທະນະທໍາ ໂດຍປະຊາສໍາພັນຜ່ານຮູບແບບດິຈິຕອນໃນຍຸກເຕັກໂນໂລຊີຂໍ້ມູນຂ່າວສານ ໂດຍການມີສ່ວນຮ່ວມຂອງທຸກພາກສ່ວນ ທີ່ກ່ຽວຂ້ອງໃນຊຸມຊົນ.

ຜົນຈາກການພິສູດ ຂໍ້ສົມມຸດຖານໂດຍອີງໃສ່ເພດ, ຊາວໄຕດໍາບໍ່ມີຄວາມແຕກຕ່າງກັນໃນເລື່ອງວິທີການປົກປັກຮັກສາ ແລະ ສົ່ງເສີມວັດທະນະທໍາຂອງຊາວໄຕຕົນ. ຊາວໄຕດໍາມີຄວາມແຕກຕ່າງກັນ ເລື່ອງວິທີການປົກປັກຮັກສາ ແລະ ສົ່ງເສີມວັດທະນະທໍາຂອງເຜົ່າຕົນໂດຍອີງໃສ່ກຸ່ມອາຍຸ. ເຖິງແມ່ນວ່າຊາວໄຕດໍາມີຄວາມແຕກຕ່າງກັນ ເລື່ອງວິທີການປົກປັກຮັກສາວັດທະນະທໍາຂອງຕົນ, ແຕ່ພວກເຂົາມີວິທີການສົ່ງເສີມວັດທະນະທໍາຂອງພວກເຂົາເໝືອນກັນ ໂດຍອີງໃສ່ກຸ່ມຊົນຊາວໄຕດໍາແຕ່ລະບ້ານ.

ຈາກຜົນການຄົ້ນພົບຂອງໂຄງການຄົ້ນຄວ້າຄັ້ງນີ້ ສາມາດຖອດຖອນບົດຮຽນບາງຢ່າງຄື: ພິທີກໍາເສັນເຮືອນ, ປາດໂຕງເຂົ້າໃໝ່, ພິທີກໍາກໍາບ້ານຕາມຂະໜົບທໍານຽມຮີດຄອງປະເພນີຂອງຊາວໄຕດໍາແມ່ນເພື່ອສືບທອດປະຕິບັດຮີດຄອງປະເພນີອັນດີງາມຂອງຊາວໄຕດໍາເວົ້າລວມ ເວົ້າສະເພາະເພື່ອລ້ຽງຜີເຮືອນ, ຜີພໍ່ຜີແມ່, ຜີປູ່ຍ່າຕາຍາຍ, ຜີຍາດພີ່ ນ້ອງ, ຜີບັນພະບຸລຸດ ເທວະດາຟ້າແຖນ ແລະ ເຮັດໃຫ້ລູກຫຼານໃນຕະກຸນຢູ່ດີດີມີແຮງ ແລະ ມີອາຍຸໝັ້ນຍືນຍາວ ແລະ ປັດສະຈາກໂລກໄພເຄາະຮ້າຍທັງປວງ.

ຮູບທີ 5: ຈຸ້ມເຈື້ອເຊື້ອສາຍດຽວກັນກິນເຂົ້າປ່ານເຈົ້າເສື້ອ ເອີ້ນສິ່ງດຽວກັນມາກິນນໍາກັນ



ວິທີການປົກປັກຮັກສາ ແລະ ສົ່ງເສີມມໍລະດົກທາງດ້ານວັດທະນະທໍາຂອງຕົນ ແມ່ນມີຫຼາກຫຼາຍກິດຈະກໍາ ໂດຍການຍົກສູງຄວາມຮັບຮູ້ດ້ານວັດທະນະທໍາ ແລະ ປູກຈິດສໍານຶກດ້ານວັດທະນະທໍາຂອງເຂົາເຈົ້າໃຫ້ລູກຫຼານ ເຊິ່ງເປັນການສືບທອດໂດຍການສະໜັບສະໜູນຈາກພາກລັດ ແລະ ເອກະຊົນກໍຄືທຸກພາກສ່ວນກ່ຽວຂ້ອງ. ຄຽງຄູ່ກັນນັ້ນ, ການເຜີຍແຜ່ວັດທະນະທໍາໃນຮູບແບບສິລະປະການສະແດງ. ພ້ອມນັ້ນ. ກໍຍັງມີການປ່ຽນແປງ, ດັດສົມ ແລະພັດທະນາບາງພິທີກໍາໃຫ້ເໝາະສົມກັບສະພາບຂອງສັງຄົມປັດຈຸບັນ; ສ້າງກິດຈະກໍາສົ່ງເສີມວັດທະນະທໍາໂດຍການປະຊາສໍາພັນ ຜ່ານຮູບແບບດິຈິຕອນໃນຍຸກເຕັກໂນໂລຊີຂໍ້ມູນຂ່າວສານ ໂດຍການມີສ່ວນຮ່ວມຂອງຊຸມຊົນ, ພາກລັດ, ເອກະຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ຮູບທີ 6: ເຈົ້າຂອງເຮືອນກໍາລັງລ້ຽງຜີເຮືອນມື້ປາດໂຕງເຂົ້າໃໝ່



## 5. ອະພິປາຍຜົນ

ຜົນການຄົ້ນຄວ້າຍັງສອດຄ່ອງກັບຜົນການຄົ້ນຄວ້າກໍລະນີສຶກສາ ແບບຄຸນນະພາບຂອງທ່ານ Chansri ແລະ ທ່ານ Burusphat (2017) ເລື່ອງຂັບໄຕດໍາ (Black Tai Folksongs) ກ່ຽວກັບເລື່ອງການປົກປັກຮັກສາ ແລະ ດັດສົມວັດທະນະທໍາດົນຕີເພື່ອການຮັກສາເອກະລັກຂອງຊົນເຜົ່າ ໂດຍການເກັບກໍາຂໍ້ມູນຈາກຊາວໄຕ ດໍາທີ່ອາໄສຢູ່ (ສາມບ້ານໄທດໍາ ໃນແຂວງຫຼວງນໍ້າທາ ສປປ ລາວ), (ເມືອງແຖນ ຫຼື ດຽນບຽນຟູ, ແຂວງເຊີນລາ ສສ. ຫວຽດນາມ) ແລະ (ເມືອງເຂົາຍອຍ ແຂວງເພັດສະບູລີ ລາຊະອານາຈັກໄທ) ໄດ້ຖືກຄັດເລືອກເຂົ້າໃນການສຶກສາຄົ້ນຄວ້າ, ເຊິ່ງພົບວ່າ ໄຕດໍາດໍາເນີນພິທີການເຮັດພິທີກໍາເສັນເຮືອນ, ພິທີກໍາບ້ານ ຫຼື ພິທີລ້ຽງຜີເຮືອນ (Sen-Ruen ritual, The Liang-Chao-Baan ritual or house-raising ritual) ແມ່ນມີຈຸດປະສົງຕາມຄວາມເຊື່ອທາງສາສະໜາຜີ (animistic spirit beliefs) ທີ່ເປັນສ່ວນໜຶ່ງຂອງປະເພນີວັດທະນະທໍາໄຕດໍາ. ຊາວໄຕດໍາມີຄວາມເຊື່ອທີ່ວ່າ "ຜີຟ້າ" ຫຼື "ເທວະດາ" ເຊື່ອກັນວ່າ ເທວະດາເປັນຜູ້ສ້າງໂລກ ແລະ ເປັນແຮງບັນດານໃຈໃຫ້ວິນຍານບັນພະບຸລຸດ ເອີ້ນວ່າ "ຜີເຮືອນ" ດັ່ງນັ້ນ, ຜີຈຶ່ງຖືກນິລະນາມວ່າເປັນສິ່ງມະຫັດສະຈັນ. ເຊິ່ງຕາມຄວາມເຊື່ອວ່າສາມາດປົກປ້ອງສະມາຊິກໃນຊຸມຊົນຈາກໄພອັນຕະລາຍ ແລະ ເຮັດໃຫ້ພວກເຂົາມີຊີວິດຄວາມສະຫງົບປອດໄພ ແລະ ມີຊີວິດຊີວາ.

ຄຽງຄູ່ກັນນັ້ນ, ຜົນການຄົ້ນຄວ້າຄັ້ງນີ້ ຍັງສອດຄ່ອງກັບຜົນການຄົ້ນຄວ້າ ແບບຄຸນນະພາບຂອງທ່ານ Phon-ngam (2016) ກ່ຽວກັບເລື່ອງປະເພນີການຖັກແສ່ວ ແລະ ການນຸ່ງຖືຂອງຊົນເຜົ່າໄຕດໍາ ຈາກບ້ານວັດທະນະທໍາທີ່ຕັ້ງຢູ່ ບ້ານນາປ່າຫາດ ຕໍາບົນເຂົາຂຽວ ເມືອງຊຽງຄານ ແຂວງເລີຍ ປະເທດໄທ. ຜົນການຄົ້ນຄວ້າຂອງທ່ານພົບວ່າ: ພິທີກໍາທີ່ເອີ້ນວ່າ "ປາດໂຕງ" ແມ່ນເອົາອາຫານຖວາຍໃຫ້ຜີບັນພະບຸລຸດ, ຜີເຈົ້າກົກເຈົ້າເຫຼົ່າ (penates), ພິທີກໍາທີ່ເອີ້ນວ່າ "ເສັນເຮືອນ" ກໍມີຄວາມໝາຍອັນດຽວກັນຄື: ເອົາເຂົ້າ, ປາ ແລະ ອາຫານຫວານຄາວ ເຄື່ອງບູຊາທັງໝົດຖວາຍໃຫ້ຜີບັນພະບູລຸດ ຜີເຈົ້າກົກເຈົ້າເຫຼົ່າ (penates) ເພາະວ່າການດໍາລົງຊີວິດຢູ່ໃນໂລກນີ້, ໄຕດໍາມີຄວາມເຊື່ອວ່າ ເທວະດາຟ້າແຖນເປັນເທບພະເຈົ້າ ຫຼື ເທວະດາເປັນຜູ້ຮັກສາບ້ານ, ປົກປ້ອງຄວາມສະຫງົບສຸກຂອງຜູ້ຢູ່ອາໄສ, ການເດີນທາງອອກນອກບ້ານໄປເຮັດວຽກຢູ່ບ່ອນອື່ນ, ການເຮັດແນວນີ້ຕໍ່ຜີບັນພະບຸລຸດ ເພາະເຊື່ອວ່າຈະບໍ່ອຶດຫິວ ແລະ ເຮັດໃຫ້ລູກຫຼານຮັ່ງມີ. ສະນັ້ນ ໄຕດໍາຈຶ່ງຈັດຕັ້ງພິທີກໍາເຫຼົ່ານີ້ທຸກໆປີ.

ພ້ອມນັ້ນ, ຜົນການຄົ້ນຄວ້າຄັ້ງນີ້ ຍັງສອດຄ່ອງກັບຜົນການຄົ້ນຄວ້າ ແບບຄຸນນະພາບຂອງທ່ານ Phon-ngam (2016) ເຊິ່ງທ່ານໄດ້ຄົ້ນຄວ້າ ກ່ຽວກັບປະເພນີການຖັກແສ່ວ ແລະ ການນຸ່ງຖືຂອງຊົນເຜົ່າໄຕດໍາ ຈາກບ້ານວັດທະນະທໍາທີ່ຕັ້ງຢູ່ ບ້ານນາປ່າຫາດ ບ້ານເຂົາຂຽວ ເມືອງຊຽງຄານ ແຂວງເລີຍ ປະເທດໄທ. ຜົນການຄົ້ນຄວ້າຂອງທ່ານພົບວ່າ ຮີດຄອງປະເພນີຂອງເຜົ່າໄຕດໍາສາມາດປົກປັກຮັກສາ ແລະ ສົ່ງເສີມ ຖ້າຄົນໃນຊຸມຊົນມີຄວາມເພີ່ມທະວີການຮຽນຮູ້ແຫຼ່ງວັດທະນະທໍາ, ພິທີກໍາ ແລະ ຮີດຄອງປະເພນີ ທີ່ເປັນເອກະລັກສະເພາະຂອງຊາວໄຕດໍາ, ເຜີຍແຜ່ວັດທະນະທໍາຢ່າງກວ້າງຂວາງ ແລະ ສ້າງແຮງດຶງດູດຫຼາຍເທົ່າທີ່ເປັນໄປ ກ່ຽວກັບກິດຈະກໍາດ້ານວັດທະນະທໍາຂອງຊຸມຊົນໄຕດໍາເຊິ່ງງກວມເອົາບັນດາຮີດຄອງປະເພນີອັນກວ້າງຂວາງ (ວັດທະນະທໍາ, ປະເພນີ ແລະ ວິຖີຊີວິດເຊັ່ນ: ເຮືອນ, ວິຖີຊີວິດ, ການຫຼິ້ນ, ພາສາ, ການຖັກ ແສ່ວ, ການນຸ່ງຖື, ອາຫານການກິນ ແລະ ຈັດງານພິທີກໍາຂອງເຜົ່າໄຕດໍາ).

ນອກນັ້ນ, ຜົນການຄົ້ນຄວ້າຄັ້ງນີ້ ຍັງສອດຄ່ອງກັບຜົນການຄົ້ນຄ້ວາຄຸນນະພາບ ແບບກໍລະນີສຶກສາໂດຍທ່ານ Chansri and Burusphat (2017) ກ່ຽວກັບເລື່ອງການປົກປັກຮັກສາ ແລະ ດັດສົມວັດທະນະທໍາດົນຕີເພື່ອການຮັກສາເອກະລັກຂອງຊົນເຜົ່າ. ເກັບກໍາຂໍ້ມູນຈາກຊາວໄຕດໍາທີ່ອາໄສຢູ່ (ສາມບ້ານໄທດໍາ ໃນແຂວງຫຼວງນໍ້າທາ ສປປ ລາວ), (ເມືອງແຖນ ຫຼື ດຽນບຽນຟູ, ແຂວງເຊີນລາ ສສ. ຫວຽດນາມ) ແລະ ໄທ (ເມືອງເຂົາຍອຍ ແຂວງເພັດສະບູລີ ລາຊະອານາຈັກໄທ) ໄດ້ຖືກຄັດເລືອກເຂົ້າໃນການສຶກສາຄົ້ນຄວ້າ. ຜົນການຄົ້ນຄວ້າຂອງພວກທ່ານພົບວ່າ ການອະນຸລັກວັດທະນະທໍາບັນດາຊົນເຜົ່າຄື ການປູກຈິດສໍານຶກດ້ານວັດທະນະທໍາຂອງເຂົາເຈົ້າໃຫ້ແກ່ລູກຫຼານດ້ວຍການສະໜັບສະໜູນຈາກພາກລັດ ແລະ ເອກະຊົນໃນຊຸມຊົນ, ຍົກສູງຄວາມຮັບຮູ້ດ້ານວັດທະນະທໍາ, ຄວາມຊົງຈໍາທາງປະຫວັດສາດ, ຄວາມສາມັກຄີ. ພາຍໃຕ້ສະພາບແວດລ້ອມທີ່ມີການປ່ຽນແປງ, ຊາວໄຕດໍາປັບປຸງ ແລະ ດັດສົມຕົວເອງ ແລະ ສ້າງຂະບວນການປົກປັກຮັກສາວັດທະນະທໍາຜ່ານບັນດາບົດເພງພື້ນເມືອງ ເພື່ອຮັກສາເອກະລັກສະເພາະໃນສັງຄົມປັດຈຸບັນ.

ຜົນການຄົ້ນຄວ້າຄັ້ງນີ້ ແມ່ນມີຄວາມສອດຄ່ອງກັບຜົນການຄົ້ນຄວ້າຜ່ານມາ ເຊິ່ງຢັ້ງຢືນໃຫ້ເຫັນວ່າ: ຈຸດປະສົງຕົ້ນຕໍຂອງພິທີກໍາທີ່ເປັນເອກະລັກສະເພາະເຊັ່ນ: ພິທີກໍາປາດໂຕງເຂົ້າໃໝ່, ພິທີເສັນເຮືອນ, ພິທີກໍາບ້ານ ຫຼື ພິທີລ້ຽງຜີເຮືອນ, ຕາມຄວາມເຊື່ອທາງສາສະໜາຜີ ທີ່ເປັນສ່ວນໜຶ່ງຂອງປະເພນີວັດທະນະທໍາໄຕດໍານັ້ນ ແມ່ນເພື່ອເຮັດໃຫ້ເທວະດາຟ້າແຖນຮັກສາດູແລເບິ່ງແຍງບ້ານເມືອງ, ປົກປັກຮັກສາຊາວບ້ານໃຫ້ມີຄວາມສະຫງົບສຸກປອດ ໄພ, ມີຄວາມຜາສຸກ ແລະ ຊ່ວຍໃຫ້ຊາວເມືອງມີຜົນລະປູກດີໃນການເຮັດໄຮ່ທໍານາ, ຈະບໍ່ອຶດ ຫິວ, ເຮັດໃຫ້ລູກຫຼານຮັ່ງມີ ແລະ ທຸລະກິດການງານດີ ກໍຄືປົກປ້ອງສະມາຊິກໃນຊຸມຊົນຈາກ

ໄພອັນຕະລາຍ ເຮັດໃຫ້ພວກເຂົາມີຄວາມສຸກ ແລະ ມີຊີວິດຊີວາ; ບັນຫາວິທີການປົກປັກຮັກສາວັດທະນະທຳຂອງຊົນເຜົ່າໄຕດຳ ການປົກປັກຮັກສາຮັກສາມໍລະດົກທາງວັດທະນະທຳ ແມ່ນການປູກຈິດສຳ ນຶກ, ການຮຽນຮູ້ປະຫວັດສາດ ແລະ ການຍົກສູງຄວາມຮັບຜິດຊອບເລື່ອງວັດທະນະທຳ, ພິທີກຳ ແລະ ຮີດຄອງປະເພນີ ໂດຍມີການສະໜັບສະໜູນ ແລະ ມີຄວາມສາມັກຄີຈາກທຸກພາກສ່ວນກ່ຽວຂ້ອງໃນຊຸມຊົນ; ບັນຫາວິທີການສົ່ງເສີມວັດທະນະທຳຂອງຊົນເຜົ່າໄຕດຳ. ການສົ່ງເສີມສິລະປະວັດທະນະທຳ, ຂະໜົບທຳນຽມຮີດຄອງປະເພນີຂອງຊົນເຜົ່າ ບໍ່ພຽງແຕ່ສາມາດເຜີຍແຜ່ຜ່ານທາງເວທີຢູ່ໃນຊຸມຊົນ, ແຕ່ໃນຍຸກເຕັກໂນໂລຢີເສດຖະກິດດິຈິຕອນ ຊົນເຜົ່າສາມາດເຜີຍແຜ່ສິລະປະວັດທະນະທຳວັດ, ຂະໜົບທຳນຽມຮີດຄອງປະເພນີຂອງຕົນຜ່ານທາງອອນລາຍໃຫ້ຊາວໂລກຮັບຮູ້ວັດທະນະທີ່ເປັນເອກະລັກສະເພາະຢ່າງສະດວກສະບາຍທຸກທີ່ທຸກເວລາ.

## 6. ສະຫຼຸບຜົນ

ຊາວໄຕດຳແມ່ນແຂງໜຶ່ງຂອງຊົນເຜົ່າໄຕ ທີ່ມີຮີດຄອງປະເພນີທີ່ເປັນເອກະລັກຂອງຕົນເອງເຊັ່ນ ການນຸ່ງຖື, ການປາກເວົ້າ, ການປະຕິບັດຮີດຄອງປະເພນີຕ່າງໆ; ພ້ອມກັນນັ້ນກໍຍັງມີການປະຕິບັດຢ່າງເຄັ່ງຄັດມາໂດຍຕະຫຼອດ ຈາກຮຸ່ນຄົນສູ່ຮຸ່ນຄົນ. ຜ່ານການວິເຄາະຈາກຂໍ້ມູນຈາກແບບສອບຖາມ ແລະ ສຳພາດສຳພາດພົບວ່າ: ຈຸດປະສົງການເຮັດພິທີກຳເສັນເຮືອນ, ປາດໂຕງເຂົ້າໃໝ່ ກໍຄືພິທີກຳກຳບ້ານຂອງຊາວໄຕດຳ ແມ່ນເພື່ອເພື່ອລ້ຽງຜີເຮືອນ, ຜີພໍ່ຜີແມ່, ຜີປູ່ຍ່າຕາຍາຍ, ຜີຍາດພີ່ນ້ອງ, ຜີບັນພະບຸລຸດ, ເທວະດາຟ້າແຖນ ແລະ ເຮັດໃຫ້ລູກຫຼານໃນຕະກຸນຢູ່ດີມີແຮງ, ມີອາຍຸໝັ້ນຍືນຍາວ ແລະ ປັດສະຈາກໂລກໄພເຄາະຮ້າຍທັງປວງ. ພ້ອມກັນນັ້ນ ໃນການນັ້ນໃນເວລາເຮັດພິທີກຳກໍຈະມີຂັ້ນຕອນ ແລະ ມີການກະກຽມຢ່າງລະອຽດເຊັ່ນ ໃນມື້ກ່ອນພິທີກຳ, ໃນມື້ປະຕິບັດພິທີກຳ ແລະ ຫຼັງຈາກສຳເລັດພິທີກຳ. ພ້ອມກັນນັ້ນຊາວໄຕດຳມີການປົກປັກຮັກສາມໍລະດົກວັດທະນະທຳຂອງຕົນດ້ວຍການຮຽນຮູ້ດ້ານວັດທະນະທຳ, ປະເພນີ ແລະ ວິຖີຊີ ວິດ, ຈັດງານພິທີກຳເປັນປົກກະຕິ, ປູກຈິດສຳນຶກດ້ານວັດທະນະທຳໃຫ້ລູກຫຼານທີ່ເປັນຜູ້ສືບທອດ. ການເຜີຍແຜ່ວັດທະນະທຳໄດ້ຮັບການເອົາໃຈໃສ່ດ້ວຍຫຼາຍຮູບແບບເປັນຕົ້ນ ການສະແດງສິລະປະໃນໂອກາດງານສຳຄັນຕ່າງໆ; ສ້າງກິດຈະກຳປະຊາສຳພັນ ສົ່ງເສີມວັດທະນະທຳ ຜ່ານຮູບແບບດິຈິຕອນໃນຍຸກເຕັກໂນໂລຊີຂໍ້ມູນຂ່າວສານດ້ວຍ ການມີສ່ວນຮ່ວມຂອງທຸກພາກສ່ວນ ທີ່ກ່ຽວຂ້ອງໃນຊຸມຊົນ.

## 7. ຂໍ້ສະເໜີແນະ

ເພື່ອຕໍ່ຍອດຄວາມຮູ້ໃຫ້ກວ້າງຂວາງ, ການຄົ້ນຄວ້າໃນອະນາຄົດພາຍໜ້າ ຄວນເພີ່ມຈຳນວນກຸ່ມຕົວຢ່າງ ແລະ ສະຖານທີ່ຄົ້ນຄວ້າຕື່ມ ເພາະວ່າໂຄງການຄົ້ນຄວ້າຄັ້ງນີ້ ມີຈຳນວນກຸ່ມຕົວຢ່າງຈຳກັດເຂົ້າຮ່ວມໃຫ້ຂໍ້ມູນ.

## 8. ຂໍ້ຈຳກັດຂອງການຄົ້ນຄວ້າ

ຍ້ອນວ່າການຄົ້ນຄວ້າຄັ້ງນີ້ຄົ້ນຄວ້າວິເຄາະພຽງແຕ່ 3 ບັນຫາຕົ້ນຕໍເທົ່ານັ້ນ. ດັ່ງນັ້ນ, ຄວນພິຈາລະນາບາງເນື້ອໃນຕື່ມ ທີ່ກ່ຽວຂ້ອງກັບການປົກປັກຮັກສາ ແລະ ສົ່ງເສີມວັດທະນະທຳ.

## 9. ເອກະສານອ້າງອີງ


ລັດຖະບານແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ. (2021). *ຄວາມເປັນມາ. ໄດ້ມາຈາກ: ສົສອນພິດ ພານຸວົງ .(2011). ເອກະສານປະຫວັດ ແລະ ຂະບວນການຄົ້ນຄວ້າເພື່ອກຳນົດຊື່ເອີ້ນ ແລະ ຈຳນວນຊົນເຜົ່າໃນສ ປປ ລາວ.* ກອງປະຊຸມເຝິກອົບຮົບຄູກ່ຽວກັບການສອນພາສາລາວໃຫ້ນັກຮຽນຊົນເຜົ່າ. ແຂວງວຽງຈັນ, ປະເທດລາວ.

ສູນກາງແນວລາວສ້າງຊາດ. (2015). *ເອກະລັກຂອງຊົນເຜົ່າໄຕ.* ກົມຊົນເຜົ່າສູນກາງແນວລາວສ້າງຊາດ.

ຫ້ອງການປົກຄອງເມືອງຕົ້ນເຜີ້ງ. (2020). *ເອກະສານບົດສະຫຼຸບປະຈຳປີ.* ເມືອງຕົ້ນເຜີ້ງ, ແຂວງບໍ່ແກ້ວ, ສປປ ລາວ.

ສົມໄພ ວິໄລສັກ (2009) . *ເອກະສານປະກອບການສອນວິຊາ ວັດທະນະທຳລາວ.* ພາກວິຊາພາສາ-ວັດທະນະທຳລາວ, ຄະນະອັກສອນສາດ, ມຊ.

ສີລາ ວິລະວົງ (2014). *ປະເພນີລາວ, ການສູ່ຂວັນ ແລະປະເພນີປະຕິບັດແຫ່ງການດຳລົງຊີວິດ.* ສຳນັກພິມດອກເກດ.

ສະຫງ່າ ກຸສິຫາລາດ ພ້ອມດ້ວຍຄະນະ. (2012). *ບັນດາສາສະໜາທີ່ຖືຕືອຢູ່ ສປປ ລາວ*, ສະຖາບັນວິທະຍາສາດສັງຄົມແຫ່ງຊາດ.

ໜູນແກ້ວ ອໍລະບູນ (2008). *ບົດປາຖະກະຖາ ຫົວຂໍ້ ການອະນຸລັກ ແລະສົ່ງເສີມວັດທະນະທຳອັນດີງາມຂອງຊາດລາວ.* ກະຊວງຖະແຫຼງ

ຂ່າວ ວັດທະນະທຳ ແລະທ່ອງທ່ຽວ.

Chaigasem, T., & Tunming, N. (2021). The innovation of tourism management based on the identity of the Tai ethnic (Black Tai) of Thailand. *International Journal of Innovation, Creativity and Change*, *15*(9), 786-803.

Chansri, S., & Burusphat, S. (2017). Khup Tai Dam (Black Tai Folksongs): Preservation and adaptation of musical culture to preserve the identity of the Tai people. *Journal of Social Sciences, Humanities, and Arts*, *17*(3), 131-154.

Creswell, J. W. (2012). *Educational Research: Plan, conduct, and evaluate quantitative and qualitative research* (4th ed.). Merrill.

Creswell, J. W. (2014). *Research Design: Qualitative, Quantitative, and Mixed Methods* (4th ed.). Sage.

Edward B. Tylor. (1871). *Primitive culture: Researches into the development of Methodology, Philosophy, religion, art and Custom*.

Field, A. (2009). *Discover statistics using the program SPSS* (3rd ed.). Sage.

Field, A. (2013). *Discover statistics using the program IBM SPSS statistics* (4th ed.). Sage.

George, D., & Mallery, P. (2003). *Program SPSS for Windows. Step by step. Easy Guide*.

Hair, J. F., Black, W. C., Babin, B. J., & Anderson, R. E. (2010). *Multivariate data analysis* (7th ed.). Prentice Hall.

Lasathon Anouman. (1926). *Primitive culture*. Ministry of Culture and Tourism.

Lao Front for National Construction. (2015). *The identity of the Tai people*. Department of Tai People Lao Front for National Construction.

Orraboun Mounkeo. (2008). *The Speech text on topic conservation and promotion of the beautiful culture of Laos*. Ministry of Information, Culture and Tourism.

Phaithasithikoun Sanokphone. (2009). *Studying the protection of the community and the cultural environment along the banks of the Kok River, Chiang Rai Province*. Chiang Mai University.

Saler. (as cited in Sililath Easakoun & All, 1991). *Cross-cultural marriage of rural women in Udon Thani*. Chulalongkorn University.

Senmany Khamhung. (2004). *Folklore in the story of beliefs and traditions*. Department of Lao Language-Literature, Faculty of Letters, National University of Laos.

Sayavong Somseng. (2018). *Journal of Lao Academy of Social Sciences*.

Tangchai Sabaythip. (2015). *Studying the participation of the people in the protection of the Hmong people embroidery art Phanokkok village Pongnheang group, Maelim District, Chiengmai Province*. Chiengmai University.

Tonphuey District Administration Office. (2020). *Annual Report Document, Tonphuey District, Bokeo Province, Lao PDR*.

Vilasak Somphai. (2009). *Lao culture teaching documents*. Department of Lao Language-Culture, Faculty of Letters, The National University of Lao.

Vilavong Sila. (2004). *Lao traditions, Soukhoan and practical traditions of living*. Dorket Publishing House.

Visouthisanon Sanon. (2015). *Studying the participation of the people in the preservation of the wisdom of the villagers in Khongden group, Sanote District, Songkha Province*. Songkha University.

Viboun Sithisoth. (2011). *Studying the conservation of Mon culture for the development of community tourism, a case study of the community of Saladaeng North, Pathum Thani Province*. Latsaphat Valay Alongkorn University.